# ຄະນະຊ່ຽວຊານຈາກອົງການຕິດຕາມເສດຖະກິດມະຫາພາກ ອາຊຽນ+3 (AMRO) ລົງເຮັດວຽກຮ່ວມກັບ ທີມງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)



## ໃນຕອນເຊົ້າ ວັນອັງຄານ ວັນທີ 22 ກໍລະກົດ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຕ້ອນຮັບຄະນະຊ່ຽວຊານ ຈາກອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (ASEAN+3 Macroeconomic Research Office ຫຼື AMRO) ໃນເວລາ 9:00-10:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ທຄຕລ.



ກອງປະຊຸມພົບປະດັ່ງກ່າວ ຕາງໜ້າ ທຄຕລ ນໍາໂດຍ **ທ່ານ ສົມພອນ ຮຸ່ງຍະຈິດ ວ່າການຫົວໜ້າພະແນກ ບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດ** ພ້ອມດ້ວຍຄະນະ ຈາກພະແນກການທີ່ກ່ຽວຂ້ອງພາຍໃນ ທຄຕລ. ຕາງໜ້າອົງການ AMRO ນໍາໂດຍ **ທ່ານ ນາງ NGUYEN THI KIM CUC ຫົວໜ້າທີມຄົ້ນຄວ້າເສດຖະກິດ** ພ້ອມດ້ວຍທີມງານ ແລະ ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ (ທຫລ) ເຂົ້າຮ່ວມກອງປະຊຸມປຶກສາຫາລືຮ່ວມກັນ. ການລົງເຮັດວຽກຂອງອົງການ AMRO ໃນຄັ້ງນີ້ແມ່ນປະຕິບັດເປັນປະຈໍາທຸກປີຕາມກອບການຮ່ວມມືດ້ານການເງິນອາຊຽນ+3.

---

ໂດຍມີຈຸດປະສົງ ເພື່ອເກັບກໍາຂໍ້ມູນ ທີ່ຕິດພັນກັບຂະແໜງການທະນາຄານ ເວົ້າລວມເວົ້າສະເພາະ ກໍ່ຄືພາບລວມໃນການດໍາເນີນທຸລະກິດຂອງ ທຄຕລ ໃນແຕ່ລະໄລຍະ ລວມເຖິງການຈັດຕັ້ງປະຕິບັດນະໂຍບາຍທີ່ພາກລັດກໍານົດອອກ. ການສົນທະນາປຶກສາຫາລື ທາງຄະນະຊ່ຽວຊານອົງການ AMRO ຍັງສອບຖາມປະເດັນເຄັ່ງຮ້ອນ ໃນຂະແໜງການເງິນ-ການທະນາຄານ ເພື່ອເປັນຂໍ້ມູນພື້ນຖານ ໃນການຕິດຕາມສະພາບເສດຖະກິດມະຫາພາກຂອງ ສປປ ລາວ. ການລົງເຮັດວຽກຄັ້ງນີ້ ໄດ້ມີການປຶກສາຫາລືຮ່ວມກັນໃນຫຼາຍຫົວຂໍ້ສໍາຄັນທີ່ຕິດພັນກັບ ທຄຕລ ເຊັ່ນ: ພາບລວມການດໍາເນີນທຸລະກິດ, ການຂະຫຍາຍຕົວຂອງຊັບສິນ ແລະ ກໍາໄລ, ການຂະຫຍາຍຕົວຂອງຍອດສິນເຊື່ອ ແລະ ການຖືຄອງພັນທະບັດ, ແຜນການປັບປຸງອັດຕາສ່ວນຄວາມພຽງພໍຂອງທຶນ ແລະ ຄວາມຄືບໜ້າໃນການເພີ່ມທຶນຈົດທະບຽນ ລວມເຖິງການຈັດຕັ້ງປະຕິບັດຫຼັກການ Basel II ແລະ IFRS-9, ຜົນປະໂຫຍດ ແລະ ສິ່ງທ້າທາຍໃນການເຂົ້າຮ່ວມ ບໍລິສັດ LFX. ພາຍຫລັງການລົງເຮັດວຽກຮ່ວມກັບ ທຄຕລ, ຄະນະດັ່ງກ່າວກໍ່ຈະໄດ້ເຮັດວຽກຮ່ວມກັບກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ເພື່ອລາຍງານຜົນການລົງເຮັດວຽກໃນຄັ້ງນີ້.